# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດ ຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນ ພຸດ ວັນທີ 8 ກັນຍາ ປີ 2021

ສະບາຍດີ ບັນດາທ່ານທີ່ກຳລັງຕິດຕາມຮັບຊົມ ແລະ ຮັບຟັງ ການຖ່າຍທອດສົດ ການຖະແຫຼງຂ່າວຂອງຄະນະສະເພາະກິດ **ປະຈຳວັນພຸດ ວັນທີ 8 ກັນຍາ ປີ 2021**.

- ຂ້າພະເຈົ້າ ດຣ. ສີສະຫວາດ ສຸດທານີລະໄຊ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ ຈະຖະແຫຼງຂ່າວ ກ່ຽວກັບ ສະພາບໂຄວິດ-19 ຢູ່ໃນ ສປປ ລາວ, ໃນໂລກ ແລະ ບາງຂໍ້ແນະນຳເພີ່ມເຕີມ.

**ຕໍ່ໄປ ຂ້າພະເຈົ້າ ຂໍລາຍງານ:**

❖ **ສະພາບການລະບາດພະຍາດໂຄວິດ-19 ຢູ່ ສປປ ລາວ, ມາຮອດວັນທີ 7 ກັນຍາ 2021:**

ໄດ້ກວດວິເຄາະທັງໝົດ **5.385** ຄົນ, ໃນນັ້ນ ກວດພົບຜູ້ຕິດເຊື້ອໃໝ່ ທັງໝົດ **211** ຄົນ ເຊິ່ງ**ຕິດເຊື້ອໃນຊຸມຊົນ 77 ຄົນ** ເປັນຜູ້ສຳຜັດໃກ້ຊິດນຳຜູ້ຕິດເຊື້ອທີ່ຜ່ານມາ ແລະ **ກໍລະນີນຳເຂົ້າ ມີ 134 ຄົນ** ຈາກ ສະຫວັນນະເຂດ 53 ຄົນ, ຈຳປາສັກ 15 ຄົນ, ນະຄອນຫຼວງວຽງຈັນ 16 ຄົນ, ສາລະວັນ 34 ຄົນ, ຄຳມ່ວນ 10 ຄົນ ແລະ ຫຼວງພະບາງ 6 ຄົນ . ເຊິ່ງກວດພົບຈາກແຮງງານລາວ ຫຼື ຜູ້ທີ່ເດີນທາງມາຈາກປະເທດເພື່ອນບ້ານ ເຂົ້າຕາມຈຸດຜ່ານແດນສາກົນ.

**ຜູ້ຕິດເຊື້ອໃນຊຸມຊົນ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງແມ່ນເປັນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອທີ່ຜ່ານມາ ລາຍລະອຽດດັ່ງນີ້:**

- **ນະຄອນຫຼວງ 7 ຄົນ:** ຈາກ ບ. ດອນຕິ້ວ ມ. ໄຊທານີ 1 ຄົນ, ບ້ານ. ໄຊ ເມືອງໄຊທານີ 1 ກໍລະນີ (ມາຈາກແຂວງບໍ່ແກ້ວ ກັກໂຕ ຢູ່ ສູນປາກງື່ມ), ບ້ານຊຽງດາ ເມືອງໄຊເສດຖາ 1 ຄົນ ມີອາການໄລຍະກັກຕົວ, ບ້ານອ່າງໃຫ່ຍ 3 ຄົນ ເປັນຜູ້ສຳຜັດກັບຜູ້ຕິດເຊື້ອຜ່ານມາ ແລະ ບ້ານ ຫາດຊາຍຂາວ ເມືອງຫາດຊາຍຟອງ 1 ຄົນ ເປັນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອຜ່ານມາເຊັ່ນກັນ.
- **ຄຳມ່ວນ 30 ຄົນ**: ກຳລັງເກັບກຳຂໍ້ມູນຄົນເຈັບຕິດເຊື້ອທັງໝົດ ສ່ວນລາຍລະອຽດຈະແຈ້ງໃຫ້ທ່ານຊາບພາຍຫຼັງ
- **ຈຳປາສັກ 16 ຄົນ:** 10 ຄົນແມ່ນພົວພັນກັບກຸ່ມຕິດເຊື້ອເມືອງປະທຸມພອນ, 2 ຄົນແມ່ນຢູ່ນະຄອນປາກເຊ ແລະ ກຳລັງສອບຖາມຂໍ້ມູນເພີ່ມເຕີມ 6 ຄົນ.

- **ສະຫວັນນະເຂດ 10 ຄົນ:** 05 ຄົນແມ່ນເຈົ້າໜ້າທີ່ຢູ່ຄ້າຍຄຸມຂັງ, ພະນັກງານຂັບລົດບໍລິສັດທຸມຄຳ 02 ຄົນ, 1 ຄົນແມ່ນພະນັກງານເກັບຂີ້ເຫຍື້ອ, 2 ຄົນແມ່ນປະຊາຊົນ ຈາກບ້ານສະພານເໜືອ ແລະ ບ້ານໂພນສະຫ່ວາງໃຕ້.
- **ບໍ່ແກ້ວ 5 ຄົນ:** ໃນນີ້ຈາກເຂດເສດຖະກິດພິເສດ 3 ຄົນ ແລະ 2 ຄົນຈາກເມືອງຫ້ວຍຊາຍ.
- **ສາລະວັນ 7 ຄົນ:** ທັງໝົດເປັນຄົນໃນຄອບຄົວດຽວກັນກັບຜູ້ຕິດເຊື້ອຜ່ານມາ
- **ຫຼວງພະບາງ 2 ຄົນ:** 1 ຄົນເດີນທາງມາຈາກແຂວງບໍ່ແກ້ວທີ່ກັກໂຕຢູ່ສູນຈຳກັດບໍລິເວນ ແລະ 1 ຄົນແມ່ນຜູ້ສຳຜັດໃກ້ຊິດກັບຜູ້ຕິດເຊື້ອຜ່ານມາ.

➢ ປະຈຸບັນ ຜູ້ຕິດເຊື້ອໃໝ່ທັງໝົດ ໄດ້ເຂົ້ານອນແຍກປ່ຽວ ແລະ ຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທີ່ຖືກກຳນົດໄວ້.

- ມາຮອດມື້ນີ້ ພວກເຮົາມີຕົວເລກຜູ້ຕິດເຊື້ອສະສົມທັງໝົດ **16,576 ຄົນ**, ເສຍຊີວິດສະສົມ **16** ຄົນ ແລະ ຄົນເຈັບກຳລັງປິ່ນປົວ ທັງໝົດ **4.510** ຄົນ.

- **ສຳລັບ ບ້ານ ທີ່ຖືກກຳນົດເປັນບ້ານແດງໃໝ່ໃນນະຄອນຫຼວງວຽງຈັນ ມີ 2 ບ້ານ ຄື: ບ້ານດອນຕິ້ວ ເມືອງໄຊທານີ ແລະ ບ້ານອ່າງໃຫ່ຍ ເມືອງ ສີໂຄດຕະບອງ.**

- **ສຳລັບສະຖານທີ່ສ່ຽງໃນນະຄອນຫຼວງວຽງຈັນມີ: ຕະຫຼາດດົງໝາກຄາຍ, ຕະຫຼາດຂາຍຜັກແຄມທາງໃຫ່ຍບ້ານສະພັງມຶກ.**

- ຜູ້ທີ່ມີຈຸດປະສົງຢາກກວດຊອກຫາເຊື້ອໂຄວິດ-19 ສຳລັບ ນະຄອນຫຼວງວຽງຈັນ ຢູ່**ຈຸດເກັບຕົວຢ່າງບຶງຂະຫຍອງ** ເຊິ່ງເປີດໃຫ້ບໍລິການບັນດາທ່ານທຸກວັນ (ວັນຈັນ

ຫາ ວັນອາທິດ) ໃນຕອນເຊົ້າ ເວລາ 9:00-12:00 ໂມງ ແລະ ຍັງມີທີມງານເກັບຕົວຢ່າງເຄື່ອນທີ່ໄປເກັບໃນສະຖານທີ່ທີ່ມີການລາຍງານຄົນເຈັບຕິດເຊື້ອ.

- ສໍາລັບແຂວງ ແມ່ນທ່ານສາມາດໄປກວດຊອກຫາເຊື້ອໄດ້ຢູ່ໂຮງໝໍແຂວງ ຫຼື ສະຖານທີ່ທີ່ກໍານົດໄວ້.

## ➢ ການເຝົ້າລະວັງຢູ່ຕາມຈຸດຜ່ານແດນ ໃນຂອບເຂດທົ່ວປະເທດ

- ວັນທີ 7 ກັນຍາ 2021 ມີຜູ້ເດີນທາງເຂົ້າຕາມດ່ານຕ່າງໆໃນ ສປປ ລາວ ຈໍານວນທັງໝົດ **2,489** ຄົນ ທຸກຄົນໄດ້ຜ່ານການວັດແທກອຸນຫະພູມ ແລະ ບໍ່ພົບຜູ້ມີອາການໄຂ້ ຫຼື ອາການຜິດປົກກະຕິ.

- ປັດຈຸບັນ ທົ່ວປະເທດມີສູນຈຳກັດບໍລິເວນທີ່ຍັງເປີດຢູ່ **93** ສູນ ແລະ **54** ໂຮງແຮມ , ມີຜູ້ຈຳກັດບໍລິເວນ **8,649** ຄົນ.

➢ **ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບການຕິດເຊື້ອໃນທົ່ວໂລກ:**

- ປັດຈຸບັນ ທົ່ວໂລກມີລາຍງານຜູ້ຕິດເຊື້ອສະສົມທັງໝົດ 222,584,667 (471,510ໃໝ່), ເສຍຊີວິດທັງໝົດ 4,597,140 (7,952 ໃໝ່), ປິ່ນປົວຫາຍດີ 199,137,279 (504,997 ໃໝ່). ສຳລັບ 3 ອັນດັບ ປະເທດທີ່ມີຜູ້ຕິດເຊື້ອ ແລະ ເສຍຊີວິດຫຼາຍກວ່າໝູ່ໃນໂລກ ກໍ່ຍັງແມ່ນ ສະຫະລັດອາເມລິກາ**,** ອິນເດຍ ແລະ ບຣາຊິວ.

- **ບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ**

  - ປະເທດທີ່ລາຍງານຜູ້ຕິດເຊື້ອຫຼາຍກ່ວາໝູ່ແມ່ນ ສສ ຫວຽດນາມ ມີລາຍງານຜູ້ຕິດເຊື້ອໃໝ່ **14,208** ຄົນ ແລະ ເສຍຊີວິດໃນມື້ດຽວ **316** ຄົນ. ຮອງລົງມາແມ່ນ ປະເທດໄທ ມີຜູ້ຕິດເຊື້ອໃໝ່ **13,821** ແລະ ເສຍຊີວິດໃນມື້ດຽວ **241** ຄົນ,

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ**

- ມາຮອດປະຈຸບັນ ສະພາບການລະບາດພະຍາດ COVID-19 ໃນທົ່ວໂລກຍັງບໍ່ມີທ່າອຽງຫຼຸດລົງ, ຫຼາຍປະເທດມີການລະບາດຮອບໃໝ່ ຈາກສາຍພັນທີ່ມີການແຜ່ເຊື້ອຢ່າງໄວວາ ແລະ ດັ່ງທີ່ພວກເຮົາຮູ້ກັນແລ້ວວ່າ ພະຍາດ ໂຄວິດ-19 ມີການພັດທະນາ ແລະ ປັບພັນທຸກໍາໂຕເອງໄປເລື້ອຍໆ ເຮັດໃຫ້ມີສາຍພັນໃໝ່ເກີດຂຶ້ນເລື້ອຍໆ ເຊິ່ງຫຼາຍປະເທດໃນທົ່ວ

ໂລກ ລວມທັງ ສປປລາວ ກໍ່ໄດ້ເອົາໃຈໃສ່ເຝົ້າລະວັງຢ່າງໃກ້ຊິດ ແລະ ຕິດຕາມການເກີດລະບາດໃນທົ່ວໂລກ ເພື່ອຕິດຕາມ , ປະເມີນສະຖານະການ ແລະ ກຽມຄວາມພ້ອມຮັບມືໃນບ້ານເຮົາ.

- ສໍາລັບ ສ ປປ ລາວ ສະພາບການລະບາດໃນປັດຈຸບັນມີການລາຍງານຜູ້ຕິດເຊື້ອໃນຊຸມຊົນເພີ່ມຂຶ້ນຫຼາຍແຂວງ ເປັນຕົ້ນແມ່ນພົບກາານລະບາດສາຍພັນເດວຕາທີ່ມີອັດຕາການແຜ່ເຊື້ອຢ່າງໄວວາເຊັ່ນ: ແຂວງຄໍາມ່ວນ, ສະຫວັນນະເຂດ, ຈໍາປາສັກ, ສາລະວັນ, ນະຄອນຫຼວງວຽງຈັນ, ຫຼວງພະບາງ ແລະ ບໍ່ແກ້ວ ເຊິ່ງຍັງມີຄວາມສ່ຽງສູງທີ່ຈະມີການລະບາດໃນຊຸມຊົນເປັນວົງກ້ວາງຖ້າພວກເຮົາບໍ່ພ້ອມກັນເອົາໃຈໃສ່ປະຕິບັດມາດຕະການປ້ອງກັນຢ່າງເຂັ້ງຄັດໂດຍສະເພາະເອົາໃຈໃສ່ໃນກຸ່ມຄົນທີ່ມີຄວາມສ່ຽງເປັນຕົ້ນແມ່ນຜູ້ໃຫ້ບໍລິການລູກຄ້າຕ່າງໆເຊັ່ນ: ຄົນຂັບລົດ, ຜູ້ຂາຍເຄື່ອງຍ່ອຍ ແລະ ອາຫານແຄມທາງພະນັກງານຕ້ອນຮັບ ແລະ ອື່ນໆທີ່ພົວພັນກັບຫຼາຍຄົນໃນແຕ່ລະວັນຄວນມີສະຕິໃນການ

ປ້ອງກັນຕົນເອງເຊັ່ນ: ໃສ່ຜ້າປິດປາກ-ດັງ, ການຮັກສາໄລຍະຫ່າງ, ໝັ່ນລ້າງມືເລື້ອຍໆ ດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມືທີ່ມີທາດເຫຼົ້າ 70 ຂຶ້ນໄປ, ຮັກສາມາລະຍາດໃນການໄອ-ຈາມ.

- ສຳລັບສະຖານທີ່ສັກວັກຊີນໃນນະຄອນຫຼວງວຽງຈັນ ບັນດາທ່ານສາມາດໄປຮັບການສັກຢາວັກຊີນເຂັມທີ່ 1 ແລະ ເຂັມທີ່ 2 ໄດ້ທີ່ບັນດາໂຮງໝໍເມືອງ, ໂຮງໝໍສູນກາງ ແລະ ສະຖານທີ່ກຳນົດໄວ້, ມາຮອດປະຈຸບັນ ສປປ ລາວ ສັກວັກຊີນ <u>ເຂັມທີ 1</u> = 2.560.372 (ອັດຕາປົກຄຸມ 34.89%) ແລະ ທຸກເຂັມທີ່ແນະນຳ = 1.842.398 (25.11 %).

- ທຸກຄົນມີຄວາມສ່ຽງທີ່ຈະຕິດເຊື້ອພະຍາດໂຄວິດ-19 ໄດ້ ເຖິງວ່າຈະໄດ້ຮັບວັກຊີນຄົບໂດສກໍ່ຕາມ, ສິ່ງທີ່ຄວນເອົາໃຈໃສ່ແມ່ນປະຕິບັດມາດຕະການປ້ອງກັນຢ່າງເຄັ່ງຄັດ. ຄົນທີ່ຕິດເຊື້ອພະຍາດໂຄວິດ-19 ສາມາດປິ່ນປົວຫາຍດີໄດ້ ແລະ ຜູ້ທີ່ປິ່ນປົວຄົບກຳນົດແລ້ວ ສາມາດດຳລົງ

ຊີວິດປົກກະຕິ ແລະ ບໍ່ສາມາດແຜ່ເຊື້ອໃຫ້ຄົນອື່ນໄດ້ ເພາະສະນັ້ນ ທຸກຄົນໃນສັງຄົມບໍ່ຄວນລັງ ກຽດບຸກຄົນເຫຼົ່ານັ້ນ.

- ຂໍຮຽກຮ້ອງມາຍັງ ພໍ່ແມ່, ພີ່ນ້ອງ, ປະຊາຊົນ ແລະ ທຸກພາກສ່ວນໃນສັງຄົມ ຈົ່ງພ້ອມໃຈກັນ ປະຕິບັດການດໍາລົງຊີວິດປົກກະຕິແບບໃໝ່ (new normal) ແລະ ພວກເຮົາທຸກຄົນ ຕ້ອງ ຮ່ວມແຮງຮ່ວມໃຈ ແລະ ສາມັກຄີກັນ, ເພື່ອພ້ອມກັນຜ່ານຜ່າວິກິດນີ້ໄປດ້ວຍກັນ ແລະ ສາມາດກັບມາດໍາລົງຊີວິດປົກກະຕິໂດຍໄວ.

❖ ຕໍ່ໄປນີ້ ຂ້າພະເຈົ້າຂໍລາຍງານສະພາບໄຂ້ຍຸງລາຍໃນ ສປປລາວ, ນັບແຕ່ວັນທີ 26/12/2020-7/09/2021 ທົ່ວປະເທດມີກໍລະນີລາຍງານ ທັງໝົດ **1.025** ກໍລະນີ ແລະ ເສຍຊີວິດ **00** ກໍລະນີ.

- ວັນທີ 7/09/2021 ມີລາຍງານທັງໝົດ 03 ກໍລະນີ ແລະ ເສຍຊີວິດ **00** ກໍລະນີ.

- ມາຮອດນີ້ ການລາຍງານສະພາບພະຍາດ ໂຄວິດ-19 ປະຈຳວັນ ພຸດ ວັນທີ 8 ກັນຍາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້. ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານທີ່ຕິດຕາມຊົມ ແລະ ຮັບຟັງ (ຂອບໃຈ)